ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0215----

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ /ກປ

ນະຄອນຫຼວງວຽງຈັນ, ວັນທີ 01 FEB 2022

# ຄຳແນະນຳ

## ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງຂະແໜງກະສິກຳ ແລະ ປ່າໄມ້

ເຖິງ :
- ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ;
- ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ;
- ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມຄຳແນະນຳວ່າດ້ວຍການຈັດຕັ້ງຜັນຂະຫຍາຍຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 190/ຄລສພ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ສະບັບເລກທີ 01/ນຍ, ລົງວັນທີ 6 ທັນວາ 2021;
- ອີງຕາມ ແຈ້ງການຂອງກະຊວງພາຍໃນ ສະບັບເລກທີ 175/ພນ, ລົງວັນທີ 24 ກັນຍາ 2021.

ເພື່ອຈັດຕັ້ງຜັນຂະຫຍາຍ ຄຳແນະນຳ ວ່າດ້ວຍການຈັດຕັ້ງຜັນຂະຫຍາຍຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 190/ຄລສພ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ສະບັບເລກທີ 01/ນຍ, ລົງວັນທີ 6 ທັນວາ 2021; ເປັນການຜັນຂະຫຍາຍດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021 ອອກເປັນພາລະບົດບາດ ຂອງຫ້ອງການ, ບັນດາກົມ, ສະຖາບັນ ແລະ ຜັນຂະຫຍາຍ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສະບັບເລກທີ 1591/ກປ, ລົງວັນທີ 27 ທັນວາ 2021 ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ, ເປັນບ່ອນອີງໃຫ້ແກ່ບັນດາກົມ, ສະຖາບັນ ແລະ ທຽບເທົ່າ, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃນການປັບປຸງກົງຈັກການຈັດຕັ້ງ ຖືກຕ້ອງຕາມທິດກະທັດຮັດ, ໂປ່ງໃສ ແລະ ສອດຄ່ອງກັບສະພາບຕົວຈິງ.

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ ດັ່ງນີ້:

1. ໃຫ້ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ; ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ, ຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ໃຫ້ພະນັກງານ-ລັດຖະກອນ ໄດ້ຮັບຮູ້, ເຂົ້າໃຈ ພ້ອມທັງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄຳແນະນຳ ວ່າດ້ວຍການຈັດຕັ້ງຜັນຂະຫຍາຍ ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ

ສະບັບເລກທີ 190/ຄລສພ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ສະບັບເລກທີ 01/ນຍ, ລົງວັນທີ 6 ທັນວາ 2021 ເຂົ້າໃນການປັບປຸງກົງຈັກການຈັດຕັ້ງຂອງຕົນ ໃຫ້ສອດຄ່ອງ ແລະ ແທດເໝາະກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງໃນໄລຍະໃໝ່;

2. ໃຫ້ແຕ່ລະພາກສ່ວນ ຖືເອົາວຽກງານປັບປຸງກົງຈັກການຈັດຕັ້ງ ເປັນວຽກງານບູລິມະສິດໜຶ່ງ ໂດຍສ້າງແຜນລະອຽດ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງຂອງຕົນໃຫ້ໄວ ພາຍຫຼັງສ້າງແຜນແລ້ວ ໃຫ້ລາຍງານກະຊວງກະສິກຳ ແລະ ປ່າໄມ້ ເພື່ອສັງລວມລາຍງານກະຊວງພາຍໃນ;

3. ການປັບປຸງກົງຈັກການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ ຕ້ອງຮັບປະກັນຄວາມກະທັດຮັດ, ແທດເໝາະກັບຕົວຈິງ ແນໃສ່ເຮັດໃຫ້ກົງຈັກ, ຕຳແໜ່ງງານ ແລະ ຈຳນວນລັດຖະກອນ ນັບແຕ່ສູນກາງຮອດທ້ອງຖິ່ນ ຖືກຕ້ອງຕາມທິດຊີ້ນຳທີ່ວ່າ: ການຈັດຕັ້ງໜຶ່ງ ແລະ ພະນັກງານ-ລັດຖະກອນຜູ້ໜຶ່ງ ຕ້ອງຮັບຜິດຊອບຫຼາຍວຽກ ບົນພື້ນຖານດັ່ງກ່າວນີ້ ຈຶ່ງກຳນົດການໂຮມກົງຈັກທີ່ມີພາລະບົດບາດຄ້າຍຄຽງກັນ ເຂົ້າກັນ ເພື່ອເຮັດໃຫ້ພະນັກງານ-ລັດຖະກອນ ສາມາດເຮັດວຽກໄດ້ເຕັມອັດຕາ; ພາຍຫຼັງແຕ່ລະພາກສ່ວນໄດ້ຮັບອະນຸມັດຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຕົນແລ້ວ ໃຫ້ຮີບຮ້ອນຈັດຕັ້ງການກຳນົດຕຳແໜ່ງງານ ຕາມດຳລັດ 734/ລບ, ລົງວັນທີ 31 ທັນວາ 2021;

4. ສືບຕໍ່ປັບປຸງກົນໄກການຄຸ້ມຄອງໃຫ້ມີຄຸນນະພາບ, ຮັບປະກັນ ຕາມທິດບັນດາກົມ, ສະຖາບັນ ທີ່ເປັນສາຍຕັ້ງຄຸ້ມຄອງວິຊາການຢູ່ຂັ້ນສູນກາງ ເຮັດບົດບາດຄຸ້ມຄອງມະຫາພາກເປັນຕົ້ນຕໍ, ແບ່ງຂັ້ນຄຸ້ມຄອງ ໃຫ້ສອດຄ່ອງຕາມນະໂຍບາຍ 3 ສ້າງ ໂດຍແບ່ງຂອບເຂດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ຈະແຈ້ງ ແລະ ຂາດຕົວ;

5. ໃຫ້ຄົ້ນຄວ້າ, ສັບຊ້ອນ ບັນດາພະແນກ ທີ່ຂຶ້ນກັບຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ, ວຽກຊ່ວຍໜູນ ຂອງແຕ່ລະພາກສ່ວນ ເຂົ້າກັນ; ໂຮມພະແນກວິຊາການ ທີ່ເຮັດບົດບາດຊໍ້າຊ້ອນ, ເຄື່ອນໄຫວບໍ່ມີປະສິດທິພາບ ຫຼື ປະລິມານວຽກບໍ່ຫຼາຍ ເຂົ້າກັບຫົວໜ່ວຍທີ່ມີບົດບາດໃກ້ຄຽງກັນ;

6. ຜ່ານມາ, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໄດ້ເອົາໃຈໃສ່ ສົມທົບກັບຄະນະປັບປຸງກົງຈັກການຈັດຕັ້ງ ຂັ້ນແຂວງ ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງຂອງຕົນ, ແຕ່ເພື່ອສືບຕໍ່ການຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງຂອງບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສຳເລັດຕາມລະດັບຄາດໝາຍ; ສະເໜີໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ຈັດຕັ້ງປະຕິບັດຕາມແຈ້ງການ ຂອງເຈົ້າແຂວງ, ເຈົ້າຄອງ, ເຈົ້າເມືອງ, ເຈົ້ານະຄອນ ສອດຄ່ອງກັບສະພາບທ້ອງຖິ່ນຕົນ ແລະ ສຸມໃສ່ໜ້າວຽກ ດັ່ງນີ້:

   1) ຄົ້ນຄວ້າກຳນົດໂຄງປະກອບການຈັດຕັ້ງ ໃຫ້ອີງໃສ່ທ່າແຮງ, ຄວາມພ້ອມ ດ້ານຕ່າງໆ ເພື່ອກຳນົດໂຄງປະກອບການຈັດຕັ້ງ ໂດຍໂຮມເອົາໜ້າວຽກທີ່ໃກ້ຄຽງ ແລະ ຄ້າຍຄືກັນ ເຂົ້າເປັນກົງຈັກດຽວກັນຕື່ມຈາກຂະແໜງ ແລະ ໜ່ວຍງານຕົ້ນຕໍ ດັ່ງນີ້:

- <u>ຫົວໜ່ວຍຂັ້ນຂະແໜງ ທີ່ຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ</u>:

  1. ຫ້ອງການບໍລິຫານ ແລະ ແຜນການ (ປະກອບມີ ວຽກບໍລິຫານ, ຈັດຕັ້ງ, ແຜນການ ແລະ ກວດກາລັດ);
  2. ຂະແໜງປູກຝັງ;
  3. ຂະແໜງລ້ຽງສັດ ແລະ ການປະມົງ;
  4. ຂະແໜງປ່າໄມ້;
  5. ກອງກວດກາປ່າໄມ້;

6. ຂະແໜງຊົນລະປະທານ;
7. ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
8. ຂະແໜງພັດທະນາຊົນນະບົດ;
9. ສູນບໍລິການເຕັກນິກກະສິກຳ (ປະກອບມີ ວຽກສົ່ງເສີມ, ບໍລິການເຕັກນິກ ແລະ ວຽກສະຫະກອນ).

- ຫົວໜ່ວຍຂັ້ນໜ່ວຍງານ ທີ່ຂຶ້ນກັບຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ:

1. ໜ່ວຍງານບໍລິຫານ, ຈັດຕັ້ງ, ກວດກາລັດ (ປະກອບມີ ວຽກບໍລິຫານ, ຈັດຕັ້ງ, ແຜນການ ແລະ ກວດກາລັດ);
2. ໜ່ວຍງານປູກຝັງ;
3. ໜ່ວຍງານລ້ຽງສັດ ແລະ ການປະມົງ;
4. ໜ່ວຍງານປ່າໄມ້;
5. ໜ່ວຍງານກວດກາປ່າໄມ້;
6. ໜ່ວຍງານຊົນລະປະທານ;
7. ໜ່ວຍງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
8. ໜ່ວຍງານພັດທະນາຊົນນະບົດ;
9. ສະຖານີບໍລິການເຕັກນິກກະສິກຳ.

**ໝາຍເຫດ:** ການກຳນົດກົງຈັກ ຂອງແຕ່ລະພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ບໍ່ໄດ້ກຳນົດເອກະພາບ, ແບບສະເລ່ຍ ແລະ ຄືກັນທຸກແຂວງ ໝາຍວ່າ: ໃຫ້ກຳນົດຕາມສະພາບຄວາມເປັນຈິງຂອງທ້ອງຖິ່ນຕົນ.

2) ຄົ້ນຄວ້າກຳນົດໂຄງປະກອບກົງຈັກ ຂອງພະແນກ ໂດຍກຳນົດແຈ້ງມີຈັກຫົວໜ່ວຍ (ຂະແໜງ, ກອງ ແລະ ສູນ) ຕາມທິດກະທັດຮັດ, ສົມເຫດສົມຜົນ, ກົງຈັກບໍ່ໃຫຍ່ໂຕ ສອດຄ່ອງກັບ ຄຳແນະນຳ ແລະ ນິຕິກຳ ຂອງຂັ້ນເທິງ ໂດຍປະສານສົມທົບກັບຄະນະຮັບຜິດຊອບປັບປຸງກົງຈັກການຕັ້ງຂັ້ນແຂວງ;
3) ຄົ້ນຄວ້າ ຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ເປັນອັນສະເພາະຂອງພະແນກຕົນ ໂດຍອີງໃສ່ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສະບັບເລກທີ 1591/ກປ, ລົງວັນທີ 27 ທັນວາ 2021, ພົນຂະຫຍາຍກຳນົດໜ້າທີ່ຂອງບັນດາຂະແໜງການ, ກອງ ແລະ ສູນ ໃຫ້ຄົບຖ້ວນ, ຮັດກຸມ, ບໍ່ຊ້ຳຊ້ອນກັນ;
4) ພາຍຫຼັງສຳເລັດແລ້ວ ສະເໜີໃຫ້ນຳສົ່ງຮ່າງຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ ສະເໜີຜ່ານ ເຈົ້າແຂວງ/ເຈົ້າຄອງເຖິງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄວ້າເອກະພາບ ແລະ ແຈ້ງຕອບຄືນ ຫຼັງຈາກນັ້ນ ຈຶ່ງປັບປຸງຮ່າງຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ ສະເໜີທ່ານເຈົ້າແຂວງ, ເຈົ້າຄອງ ອະນຸມັດນຳໃຊ້;
- ສຳລັບຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ແມ່ນໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບ, ຊຸກຍູ້, ຕິດຕາມ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ໃນການຄົ້ນຄວ້າກຳນົດໂຄງປະກອບກົງຈັກ ແລະ ຮ່າງພາລະບົດບາດຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ຄືກັນກັບຂັ້ນຕອນການປັບປຸງກົງຈັກການຈັດຕັ້ງ ຂອງກັບພະແນກ ໂດຍແມ່ນເຈົ້າ ເມືອງ, ນະຄອນ ເປັນຜູ້ອະນຸມັດ;

7. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ປະສານສົມທົບ, ຊຸກຍູ້, ຕິດຕາມ ການປັບປຸງກົງຈັກການຈັດຕັ້ງ ຂອງ ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ; ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ;
8. ການສັບຊ້ອນ, ຈັດວາງ ພະນັກງານ-ລັດຖະກອນ ສະເໜີໃຫ້ຄະນະພັກ-ຄະນະນຳແຕ່ລະຂັ້ນ ຂອງແຕ່ລະພາກສ່ວນ ຄົ້ນຄວ້າຕາມຄວາມເໝາະສົມ ພ້ອມທັງລາຍງານຂໍທິດຊີ້ນຳຂັ້ນເທິງ ໂດຍອີງຕາມຄຳສັ່ງ ຂອງ ຄະນະເລຂາທິການສູນກາງພັກ ສະບັບເລກທີ 190/ຄລສພ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ແລະ ຄຳແນະນຳ ສະບັບເລກທີ 01/ນຍ, ລົງວັນທີ 06 ທັນວາ 2021;
9. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາຫຍຸ້ງຍາກ ໃຫ້ລາຍງານມາຍັງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ເຈົ້າແຂວງ, ເຈົ້າຄອງ, ເຈົ້າເມືອງ, ນະຄອນ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອໃຫ້ທິດຊີ້ນຳ;
10. ກຳນົດເວລາໃຫ້ສຳເລັດ ບໍ່ໃຫ້ກາຍເດືອນ ກຸມພາ 2022 ເພື່ອລາຍງານການປັບປຸງໃຫ້ກະຊວງພາຍໃນ ໃນເວລາອັນຄວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ; ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ; ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ເພື່ອຈັດຕັ້ງປະຕິບັດ ຕາມຄຳແນະນຳສະບັບນີ້ດ້ວຍ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

**ປອ. ເພັດ ພົມພິພັກ**